**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 142/ຫກ

ນະຄອນຫຼວງວຽງຈັນ, ວັນທີ 02 ກໍລະກົດ 2026

**ໜັງສືແຈ້ງເຊີນເຂົ້າຮ່ວມປະຊຸມ**

**ເຖິງ: ບັນດາວິສາຫະກິດ ແລະ ບໍລິສັດ.**

**ເລື່ອງ: ເຂົ້າຮ່ວມການປະມູນການຈັດຈ້າງທີ່ປຶກສາ ວຽກງານພັດທະນາ ລະບົບຊື້-ຂາຍ ຫຼັກຊັບແບບຄົບວົງຈອນ (Next Generation Trading System: NGTS) ຂອງ ຕະຫຼາດທຶນລາວ.**

- ອີງຕາມ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 444/ທຫລ, ລົງວັນທີ 14 ມິຖຸນາ 2022;
- ອີງຕາມ ໜັງສືສະເໜີຂອງຄະນະຮັບຜິດຊອບຄັດເລືອກບໍລິສັດ ເພື່ອປະເມີນຄວາມຕ້ອງການພັດທະນາລະບົບຊື້-ຂາຍ ຫຼັກຊັບແບບຄົບວົງຈອນຂອງຕະຫຼາດທຶນລາວ ສະບັບລົງວັນທີ 18 ມິຖຸນາ 2026.

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງເຊີນມາຍັງ **ບັນດາວິສາຫະກິດ ແລະ ບໍລິສັດ** ເພື່ອເຂົ້າຮ່ວມປະມູນແບບເປີດກວ້າງ ໃນການຈັດຈ້າງທີ່ປຶກສາ ວຽກງານພັດທະນາ ລະບົບຊື້-ຂາຍ ຫຼັກຊັບແບບຄົບວົງຈອນ (Next Generation Trading System: NGTS) ຂອງຕະຫຼາດທຶນລາວ, ຊຶ່ງມາດຕະຖານ-ເງື່ອນໄຂເບື້ອງຕົ້ນຂອງວິສາຫະກິດ ແລະ ບໍລິສັດທີ່ຈະເຂົ້າຮ່ວມການປະມູນ ມີດັ່ງນີ້:

**I. ໄລຍະທີ 1 ຂັ້ນຕອນຂາຍຊອງປະມູນ: ຜູ້ທີ່ຈະສາມາດຊື້ຊອງປະມູນໄດ້ ຕ້ອງມີເງື່ອນໄຂຄົບຖ້ວນ ຄື:**

**1.** ມີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຂະແໜງການກ່ຽວຂ້ອງ ອອກອະນຸຍາດ ແລະ ນຳໃຊ້ໄດ້ໃນປັດຈຸບັນ;

**2.** ມີໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ 2025;

**3.** ມີໃບລາຍງານຖານະການເງິນ ໂດຍຜ່ານການກວດສອບຈາກພາຍນອກ ປະຈຳປີ 2025;

**4.** ມີໃບລາຍງານການເຄື່ອນໄຫວບັນຊີຈາກສະຖາບັນການເງິນ (Bank Statement) ນັບແຕ່ຕົ້ນປີ 2026 ເປັນຕົ້ນມາ;

**5.** ມີຜົນງານ ຫຼື ປະສົບການໃນວຽກງານຕະຫຼາດທຶນ ໃນໄລຍະທີ່ຜ່ານມາ ເປັນຕົ້ນແມ່ນ ດ້ານລະບົບຊື້-ຂາຍຫຼັກຊັບ, ລະບົບ ຈົດທະບຽນ ແລະ ຮັບຝາກຫຼັກຊັບ, ລະບົບຊຳລະສະສາງຫຼັກຊັບ ແລະ ອື່ນໆ (ມີຫຼັກຖານຢັ້ງຢືນ).

**ໝາຍເຫດ:** ວິສາຫະກິດ ແລະ ບໍລິສັດ ທີ່ຈະເຂົ້າຮ່ວມຊື້ຊອງປະມູນ ຕ້ອງປະກອບ ແລະ ນຳເອົາເອກະສານຕາມ 5 ລາຍການຂ້າງເທິງຢ່າງຄົບຖ້ວນ ແລະ ມີການຢັ້ງຢືນຈາກຜູ້ອຳນວຍການບໍລິສັດກ່ຽວຂ້ອງມາພ້ອມ, ຈາກນັ້ນ ທຫລ ຈຶ່ງຈະຂາຍຊອງປະມູນໃຫ້ໄດ້. ສຳລັບມູນຄ່າຊື້ຊອງປະມູນແມ່ນ **ລາຄາ 3,000,000 ກີບ/ຊອງ;** ຖ້າຫາກວິສາຫະກິດ ຫຼື ບໍລິສັດໃດ ຫາກບໍ່ຊະນະການປະມູນ, ທຫລ ຈະບໍ່ສົ່ງເງິນຄືນໃຫ້ພາກສ່ວນກ່ຽວຂ້ອງແຕ່ຢ່າງໃດ.

**II. ໄລຍະທີ 2 ຂັ້ນຕອນການປະມູນ: ຜູ້ທີ່ໄດ້ຊື້ຊອງປະມູນແລ້ວ ຕ້ອງປະຕິບັດຕາມຂັ້ນຕອນການປະມູນ ຄື:**

**1.** ຕ້ອງປະກອບເອກະສານປະມູນໃຫ້ຄົບຖ້ວນ ຕາມທີ່ລະບຸໄວ້ໃນເອກະສານ RFP;

**2.** ຄະນະຮັບຜິດຊອບຈະນັດໝາຍຜູ້ເຂົ້າຮ່ວມການປະມູນ ເພື່ອແນະນຳ ແລະ ອະທິບາຍລາຍລະອຽດການປະກອບເອກະສານ ແລະ ດຳເນີນການປະມູນ;

**3.** ເມື່ອຮອດກຳນົດມື້ເປີດຊອງປະມູນ, ຜູ້ເຂົ້າຮ່ວມການປະມູນ ຕ້ອງຖືຊອງປະມູນ (ຊອງລາຄາ ແລະ ຊອງບົດສະເໜີໂຄງການ ພ້ອມດ້ວຍເອກະສານກ່ຽວຂ້ອງ ຕາມເງື່ອນໄຂທີ່ກຳນົດໄວ້) ຂອງຕົນມາພ້ອມ ໃນມື້ເປີດຊອງຕົວຈິງ ໂດຍຈະເປີດຊອງປະມູນ (ລາຄາ) ຂອງແຕ່ລະພາກສ່ວນພ້ອມກັນ ແບບຊ່ອງໜ້າກັບຄະນະຮັບຜິດຊອບກ່ຽວຂ້ອງ;

**4.** ຖ້າວິສາຫະກິດ ຫຼື ບໍລິສັດໃດ ໄດ້ຮັບການຄັດເລືອກເປັນຜູ້ຊະນະການປະມູນ ແມ່ນຈະໄດ້ເຊັນສັນຍາຮ່ວມວຽກກັນ ຕາມການພິຈາລະນາຂອງ ທຫລ.

ບັນດາວິສາຫະກິດ, ບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ສາມາດພົວພັນຊື້ຊອງປະມູນແຕ່ວັນທີ 03-23 ກໍລະກົດ 2026 ຢູ່ ພະແນກບໍລິຫານ, ຫ້ອງການ ທຫລ, ໝາຍເລກ ໂທລະສັບ 021 241268.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງວິສາຫະກິດ ແລະ ບໍລິສັດຕ່າງໆ ເພື່ອຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

**ພານຸສັກ ແກ່ນວົງພະຈັນ**